ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເລກທີ.1200./ອຊ
ອຸດົມໄຊ, ວັນທີ .03.10. 2023

# ຂໍ້ຕົກລົງ

## ການຈັດຕັ້ງຜັນຂະຫຍາຍ ມະຕິຕົກລົງຂອງລັດຖະບານ ວ່າດ້ວຍນະໂຍບາຍ ແລະ ມາດຕະການ ແກ້ໄຂບັນຫາການຂາດແຄນຄູສອນ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ມະຕິຕົກລົງວ່າດ້ວຍນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາການຂາດແຄນຄູສອນ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ ສະບັບເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ຄຳແນະນຳ ສະບັບເລກທີ 1289/ສສກ, ລົງວັນທີ 25 ສິງຫາ 2023 ກ່ຽວກັບ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ມະຕິຂອງລັດຖະບານ ສະບັບເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023 ວ່າດ້ວຍນະໂຍບາຍ ແລະ ມາດຕະການແກ້ໄຂບັນຫາການຂາດແຄນຄູສອນ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມອົງການປົກຄອງແຂວງອຸດົມໄຊ ຄັ້ງວັນທີ 4 ກັນຍາ 2023.

### ເຈົ້າແຂວງ ຕົກລົງ:

**ມາດຕາ 1:** ຜັນຂະຫຍາຍນະໂຍບາຍ ແລະ ມາດຕະການ ໃນການແກ້ໄຂບັນຫາການຂາດແຄນຄູສອນ:

1. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ປະສານສົມທົບອົງການປົກຄອງເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ຄະນະພັດທະນາການສຶກສາໃນແຕ່ລະຂັ້ນ ສືບຕໍ່ປຸກລະດົມ ແລະ ເພີ່ມທະວີການນຳພາ ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ລັດຖະກອນຄູ ແລະ ຄູອາສາສະໝັກໃຫ້ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມຮັບຜິດຊອບ ແລະ ຄວາມເສຍສະຫຼະ ໃນການປະຕິບັດໜ້າທີ່ການສິດສອນໃຫ້ຫຼາຍຂຶ້ນ ດ້ວຍຫຼາຍວິທີການທີ່ເໝາະສົມຢ່າງເລິກເຊິ່ງ, ທົ່ວເຖິງ ແລະ ແຂງແຮງກວ່າເກົ່າ;
2. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ເກັບກຳຂໍ້ມູນສະຖິຕິຄວາມຕ້ອງການຄູ ໃນສະຖານການສຶກສາທີ່ມີທີ່ຕັ້ງລຽບຕາມຊາຍແດນ ແລະ ເຂດທຸລະກັນດານບ່ອນທີ່ມີເງື່ອນໄຂນຳໃຊ້ບຸກຄະລາກອນທີ່ສັງກັດໃນພາກສ່ວນອື່ນຊ່ວຍສອນ, ພ້ອມທັງເກັບກຳຂໍ້ມູນຜູ້ທີ່ເຄີຍເປັນຄູສອນທີ່ເຮັດວຽກໃນຂະແໜງການສຶກສາ ແລະ ຂະແໜງການອື່ນ ເມື່ອພັກບຳນານແລ້ວ ແຕ່ມີຄວາມສະໝັກໃຈສືບຕໍ່ເປັນຄູສອນໃນເຂດຂາດເຂີນຄູ;

3. ໃຫ້ອົງການປົກຄອງເມືອງ, ກຸ່ມບ້ານ, ບ້ານ, ທຸກພາກສ່ວນໃນສັງຄົມ ຄົ້ນຄວ້າສິ່ງຈູງໃຈ ແລະ ກໍານົດມາດຕະການຊ່ວຍເຫຼືອ ລັດຖະກອນຄູ, ຄູອາສາສະໝັກ ຕາມຄວາມເໝາະສົມ ເປັນຕົ້ນທີ່ພັກອາໄສ, ເບິ່ງແຍງຊີວິດການເປັນຢູ່, ນະໂຍບາຍອື່ນໆ ຕາມຄວາມສາມາດ ແລະ ເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ;
4. ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ ເກັບກໍາຂໍ້ມູນສະຖິຕິຄູອາສາສະໝັກ ທີ່ມີຄວາມຕ້ອງການ ແລະ ຈໍາເປັນໃນແຕ່ລະຊັ້ນ, ແຕ່ລະສາຍ ແລະ ລາຍວິຊາ ໂດຍຢັ້ງຢືນຈາກພະແນກພາຍໃນ ແລ້ວສົ່ງໃຫ້ກົມຈັດຕັ້ງ ແລະ ພະນັກງານກະຊວງສຶກສາທິການ ແລະ ກິລາ;
5. ໃນແຕ່ລະເມືອງ, ສະຖານການສຶກສາທີ່ມີການຂາດແຄນຄູ ແມ່ນບໍ່ອະນຸຍາດໃຫ້ລັດຖະກອນຄູຍົກຍ້າຍໄປຂະແໜງການອື່ນ, ຖ້າມີຄວາມຈໍາເປັນ ກ່ອນຈະມີການຍົກຍ້າຍຕ້ອງສະເໜີເຖິງ ກະຊວງສຶກສາທິການ ແລະ ກິລາ ພິຈາລະນາອະນຸມັດສາກ່ອນຈຶ່ງຍົກຍ້າຍໄດ້;
6. ພະແນກສຶກສາທິການ ແລະ ກິລາ ປະສານສົມທົບ ພະແນກພາຍໃນ ເພື່ອຄົ້ນຄວ້າ ແລະ ປຶກສາຫາລືກ່ຽວກັບການຫັນເປັນພາລະກອນຄູ ແລະ ການທົດແທນຄູສູນເສຍໃນຮູບການຕ່າງໆ;
7. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ສົມທົບກັບອົງການປົກຄອງເມືອງ, ກຸ່ມບ້ານ, ບ້ານ ຄົ້ນຄວ້າການຍຸບຂັ້ນຮຽນ ແລະ ໂຮມໂຮງຮຽນຂະໜາດນ້ອຍ ບ່ອນທີ່ມີເງື່ອນໄຂເຂົ້າກັນ ແລະ ສືບຕໍ່ສ້າງຕັ້ງ, ປັບປຸງກຸ່ມໂຮງຮຽນປະຖົມ ແລະ ມັດທະຍົມ ເພື່ອຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານວິຊາການ ແລະ ແກ້ໄຂບັນຫາການຂາດແຄນຄູໃນສະເພາະໜ້າ.

**ມາດຕາ 2 ຜັນຂະຫຍາຍນະໂຍບາຍ ແລະ ມາດຕະການ ໃນການແກ້ໄຂບັນຫາການປະລະການຮຽນ**

1. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ, ແນວລາວສ້າງຊາດແຂວງ, ເມືອງ, ອົງການຈັດຕັ້ງມະຫາຊົນ ແລະ ຄະນະພັດທະນາການສຶກສາແຕ່ລະຂັ້ນ ເຮັດວຽກງານແນວຄິດກັບ ພໍ່ແມ່, ຜູ້ປົກຄອງນັກຮຽນ-ນັກສຶກສາທີ່ປະລະການຮຽນ ແລະ ມີຄວາມສ່ຽງທີ່ຈະປະລະການຮຽນ ໃຫ້ສືບຕໍ່ສົ່ງເສີມລູກຫຼານຂອງຕົນເຂົ້າຮຽນ ແລະ ຮຽນໃຫ້ຈົບການສຶກສາພາກບັງຄັບ ຕາມກົດໝາຍ ວ່າດ້ວຍການສຶກສາ;
2. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ, ພະແນກການເງິນແຂວງ ປະສານສົມທົບກັນຂຶ້ນແຜນງົບປະມານເບ້ຍລ້ຽງນັກຮຽນທຸກຍາກ, ດ້ອຍໂອກາດ ສໍາລັບຊັ້ນປະຖົມສຶກສາ, ສະໜອງອາຫານທ່ຽງໃນໂຮງຮຽນ ແລະ ເບ້ຍລ້ຽງໃຫ້ນັກຮຽນສາມັນກິນນອນຊົນເຜົ່າ; ຕິດຕາມ ແລະ ປະເມີນຜົນພ້ອມທັງລາຍງານການຈັດຕັ້ງປະຕິບັດໃຫ້ເປັນປົກກະຕິ; ນໍາໃຊ້ງົບປະມານທີ່ກະຊວງຈັດສັນໃຫ້ໃນການຈັດກອງປະຊຸມບໍາລຸງຄູ ແລະ ນັກຮຽນທີ່ມີຜົນການຮຽນຕໍ່າ ໃນຍາມພັກແລ້ງ;
3. ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ທຸກພາກສ່ວນໃນສັງຄົມ, ຊຸມຊົນ ສົ່ງເສີມພາກທຸລະກິດ ແລະ ສະມາຄົມການສຶກສາພາກເອກະຊົນ ສ້າງໂຮງລ້ຽງເດັກ, ໂຮງຮຽນອະນຸບານ, ໂຮງຮຽນກິນນອນ ເພື່ອສ້າງເງື່ອນໄຂໃຫ້ຜູ້ປົກຄອງໄປທໍາການຜະລິດ; ພ້ອມທັງຂະຫຍາຍການຮຽນ-ການສອນສາມັນວິຊາຊີບ ພາກລັດ ແລະ ເອກະຊົນ ໃນບ່ອນທີ່ມີເງື່ອນໄຂ;
4. ແຈກຢາຍປຶ້ມແບບຮຽນທີ່ກະຊວງສະໜອງ ໃຫ້ຮອດບັນດາສະຖານການສຶກສາທັນກັບເວລາ ພ້ອມທັງຄຸ້ມຄອງ ແລະ ນໍາໃຊ້ໃຫ້ຍາວນານ;
5. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ປະສານສົມທົບຄະນະພັດທະນາການສຶກສາຂັ້ນບ້ານ ແລະ ສະມາຄົມພໍ່ແມ່ນັກຮຽນ ເກັບກໍາຂໍ້ມູນນັກຮຽນທີ່ປະລະການຮຽນ ແລະ ຜູ້ທີ່ຮຽນບໍ່ຈົບການສຶກສາຂັ້ນພື້ນຖານ ເພື່ອຈັດຕັ້ງການຮຽນການສອນບໍາລຸງຍົກລະດັບການສຶກສາໃນສາຍການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ທົ່ວເຖິງ;
6. ປັບປຸງ ຄະນະພັດທະນາການສຶກສາຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ໃຫ້ມີຄວາມເຂັ້ມແຂງ;
7. ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ລົງຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນຄຸນນະພາບການສຶກສາຊັ້ນປະຖົມສຶກສາ ໂດຍສະເພາະ ການອ່ານອອກ, ຂຽນ

ໄດ້, ຄິດໄລ່ເປັນ ແລະ ປະຕິບັດນະໂຍບາຍຕໍ່ນັກຮຽນທຸກຍາກ, ດ້ອຍໂອກາດຕາມມາດຖານເງື່ອນໄຂ ທີ່ເຂົ້າຮຽນຊັ້ນມັດທະຍົມສຶກສາ ແລະ ອາຊີວະສຶກສາ;

8. ພະແນກສຶກສາທິການ ແລະ ກິລາແຂວງ ສົມທົບກັບພະແນກແຜນການ ແລະ ການລົງທຶນແຂວງ ຂື້ນແຜນ, ປຸກລະດົມແຫຼ່ງທຶນຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ, ຜູ້ປະກອບການ ແລະ ສັງຄົມ ກໍ່ສ້າງຫໍພັກນັກຮຽນ, ຄູ ໃນເຂດຈຸດສຸມ;
9. ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ບໍລິຫານການສຶກສານອກໂຮງຮຽນ ແລະ ຊຸກຍູ້ການຈັດຕັ້ງການຮຽນ-ການສອນກຸ່ມເປົ້າໝາຍທີ່ຍັງຕົກຄ້າງ ແລະ ສືບຕໍ່ບໍາລຸງຊັ້ນມັດທະຍົມຕອນປາຍໃນບ່ອນທີ່ມີເງື່ອນໄຂ, ພ້ອມທັງຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ກຸ່ມເປົ້າໝາຍ ແລະ ປັບປຸງສູນການສຶກສານອກໂຮງຮຽນຂອງແຂວງໃຫ້ມີຄວາມສອດຄ່ອງກັບເງື່ອນໄຂຕົວຈິງເຊັ່ນ: ພາສາຫວຽດນາມ, ພາສາອັງກິດ ແລະ ພາສາຈີນ;

**ມາດຕາ 3 ຜັນຂະຫຍາຍນະໂຍບາຍ ໃນການສົ່ງເສີມເຂົ້າຮຽນອາຊີວະສຶກສາ**

1. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ວິທະຍາໄລເຕັກນິກ-ວິຊາຊີບ, ອົງການປົກຄອງເມືອງ ແລະ ອົງການຈັດຕັ້ງທຸກພາກສ່ວນ ຕ້ອງໄດ້ຊ່ວຍກັນປຸກລະດົມ ສົ່ງເສີມນັກຮຽນທີ່ບໍ່ສໍາເລັດການສຶກສາ ຊັ້ນມັດທະຍົມສຶກສາ ເຂົ້າຮຽນວິຊາຊີບໃນທຸກຮູບແບບເຊັ່ນ: ການສຶກສາແບບຄູ່ຂະໜານ, ຝຶກອົບຮົມໄລຍະສັ້ນ 3 ເດືອນ, 6 ເດືອນ, 9 ເດືອນ ແລະ ລະບົບອື່ນໆ; ສົ່ງເສີມນັກຮຽນທີ່ຈົບ ມ.4 ແລະ ມ.7 ໄດ້ເຂົ້າຮຽນຕໍ່ວິຊາຊີບ ຢູ່ວິທະຍາໄລເຕັກນິກ-ວິຊາຊີບແບບປະສົມ, ວິທະຍາໄລພາກເອກະຊົນພາຍໃນແຂວງ, ມະຫາວິທະຍາໄລແຫ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
2. ປັບປຸງບຸກຄະລາກອນ, ສະພາບແວດລ້ອມ ແລະ ສິ່ງອໍານວຍຄວາມສະດວກ ຂອງວິທະຍາໄລ ພາກລັດ ແລະ ພາກເອກະຊົນ ໂດຍເນັ້ນໃສ່ປັບປຸງຄຸນນະພາບ;
3. ໃຫ້ສະຖານການສຶກສາທຸກຂັ້ນ ເປັນເຈົ້າການໂຄສະນາປຸກລະດົມ ແລະ ປະຖົມນິເທດກ່ຽວກັບຄວາມໝາຍຄວາມສໍາຄັນ ຂອງການຮຽນອາຊີວະສຶກສາ ໃຫ້ນັກຮຽນ-ນັກສຶກສາ ພາຍໃນສະຖານການສຶກສາ ດ້ວຍຫຼາຍຮູບການ, ເຊີນອະດີດນັກສຶກສາທີ່ປະສົບຜົນສໍາເລັດໃນການປະກອບອາຊີບ ແລະ ອື່ນໆ ມາພົບປະນັກຮຽນນັກສຶກສາ ເພື່ອແລກປ່ຽນບົດຮຽນຕົວຈິງ; ລົງແນະແນວ ຢູ່ໂຮງຮຽນສາມັນ ແລະ ບ້ານ, ພ້ອມທັງສາທິດແບບປະຈັກຕາ ໃຫ້ອົງການປົກຄອງບ້ານ, ພໍ່ແມ່ຜູ້ປົກຄອງ ແລະ ນັກຮຽນຮັບຮູ້ແຕ່ລະວິຊາທີ່ສອນໃນສະຖານອາຊີວະສຶກສາ ຢ່າງກວ້າງຂວາງ;
4. ໃຫ້ອົງການຈັດຕັ້ງພາກລັດ ແລະ ເອກະຊົນ ສ້າງເງື່ອນໄຂ ແລະ ເອື້ອອໍານວຍໃຫ້ນັກຮຽນທີ່ຮຽນຈົບວິຊາຊີບໃຫ້ມີວຽກເຮັດງານທໍາຫຼາຍຂຶ້ນ.

**ມາດຕາ 4 ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ**

1. ມອບໃຫ້ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ປຸກລະດົມ ແລະ ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພະນັກງານຄູ ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມຮັບຜິດຊອບ ແລະ ຄວາມເສຍສະຫຼະຕໍ່ໜ້າທີ່ວຽກງານ; ສຶກສາອົບຮົມພໍ່ແມ່ຜູ້ປົກຄອງຂອງເດັກທີ່ປະລະການຮຽນ ໃຫ້ລູກຫຼານກັບມາເຂົ້າຮຽນ ແລະ ຮຽນໃຫ້ຈົບການສຶກສາພາກບັງຄັບ (ມ.4), ສືບຕໍ່ຮຽນໃຫ້ຈົບມັດທະຍົມຕອນປາຍ ແລະ ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ;
2. ໃຫ້ອົງການປົກຄອງເມືອງ ຄົ້ນຄວ້າ ແລະ ສ້າງສິ່ງອໍານວຍຄວາມສະດວກໃຫ້ແກ່ນັກຮຽນທີ່ທຸກຍາກ ໃນເຂດຫ່າງໄກ ໄດ້ເຂົ້າຮຽນຊັ້ນມັດທະຍົມສຶກສາຕອນປາຍ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງຫຼາຍຂຶ້ນ; ກ□ານົດມາດຕະການຊ່ວຍເຫຼືອຄູສອນທີ່ເປັນລັດຖະກອນ ແລະ ຄູອາສາສະໝັກ; ສ້າງສິ່ງຈູງໃຈ ແລະ ປະຕິບັດນະໂຍບາຍໃຫ້ເຂົາເຈົ້າຢ່າງເໝາະສົມ ເປັນຕົ້ນ ທີ່ພັກອາໄສ ແລະ ເບິ່ງແຍງຊີວິດການເປັນຢູ່;
3. ມອບໃຫ້ອົງການປົກຄອງເມືອງ ຊີ້ນໍາບັນດາພາກສ່ວນເສດຖະກິດ ໃນການສົ່ງເສີມ ແລະ ຝຶກອົບຮົມວິຊາຊີບໃຫ້ແກ່ປະຊາຊົນ ມີວຽກເຮັດງານທໍາ ແລະ ມີທີ່ຢູ່ອາໄສຄົງທີ່;

4. ມອບຄວາມຮັບຜິດຊອບໃຫ້ອົງການປົກຄອງເມືອງ ຊີ້ນຳຄະນະພັກກຸ່ມບ້ານ, ອົງການປົກຄອງບ້ານ ແລະ ຄະນະພັດທະນາການສຶກສາຂັ້ນບ້ານແກ້ໄຂການປະລະການຮຽນຢ່າງເປັນເຈົ້າການ ແລະ ເປັນຮູບປະທຳ;
5. ໃຫ້ພະແນກສຶກສາທິການ ແລະ ກິລາ ສົມທົບກັບອົງການປົກຄອງເມືອງ ປັບປຸງຄະນະພັດທະນາການສຶກສາຂັ້ນເມືອງ ແລະ ຂັ້ນບ້ານ ໃຫ້ມີຄວາມເຂັ້ມແຂງ;
6. ມອບໃຫ້ອົງການປົກຄອງເມືອງ ຊີ້ນຳຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ):
   6.1 ປຸກລະດົມພໍ່ແມ່ຜູ້ປົກຄອງ ໃຫ້ສົ່ງລູກຫຼານຂອງຕົນທີ່ເຖິງເກນອາຍຸ ໃຫ້ເຂົ້າຮຽນໃນຫ້ອງລ້ຽງເດັກ, ຊັ້ນອະນຸບານ ຫຼື ຮູບແບບການສອນຕ່າງໆ ຂອງສະຖານການສຶກສາກ່ອນໄວຮຽນໃຫ້ທົ່ວເຖິງ;
   6.2 ຊຸກຍູ້ ພໍ່ແມ່, ຜູ້ປົກຄອງນັກຮຽນທີ່ຢູ່ໃນຄວາມຮັບຜິດຊອບ ໃຫ້ເອົາລູກຫຼານຂອງຕົນເຂົ້າຮຽນຕາມເກນອາຍຸ ແລະ ຮຽນໃຫ້ຈົບການສຶກສາພາກບັງຄັບ;
   6.3 ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກແກ່ລູກ-ຫຼານໃຫ້ໄດ້ຮັບການສຶກສາທີ່ດີ, ເຂົ້າຮ່ວມກິດຈະກຳ ແລະ ສຶກສາອົບຮົມເຂົາເຈົ້າໃຫ້ເປັນພົນລະເມືອງດີຂອງສັງຄົມ ແລະ ຂອງຊາດ;
   6.4 ຕິດຕາມ, ກວດກາ ຖ້າຫາກມີຄອບຄົວໃດກີດກັນ, ລຳອຽງລູກ-ຫຼານບໍ່ໃຫ້ເຂົ້າໂຮງຮຽນ ແລະ ສົ່ງເສີມລູກ-ຫຼານໄປໃນທາງບໍ່ຖືກຕ້ອງ ໃຫ້ສຶກສາອົບຮົມ, ກ່າວເຕືອນ ພ້ອມທັງເຮັດບົດບັນທຶກ;
   6.5 ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ເດັກທີ່ອອກໂຮງຮຽນແລ້ວໄດ້ກັບຄືນມາເຂົ້າໂຮງຮຽນຄືນ.
   6.6 ຊຸກຍູ້, ສົ່ງເສີມ ສະມາຄົມພໍ່ແມ່ນັກຮຽນ, ຄອບຄົວ ໃຫ້ປະກອບສ່ວນທາງດ້ານສະຕິປັນຍາ, ທຶນຮອນ, ພາຫະນະ, ວັດຖຸອຸປະກອນ, ສື່ການຮຽນ-ການສອນ, ການກໍ່ສ້າງ, ການປົກປັກຮັກສາ ແລະ ການບູລະນະສະຖານການສຶກສາ ຕາມຄວາມອາດສາມາດຂອງຊຸມຊົນ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ພະແນກສຶກສາທິການ ແລະ ກິລາ ທຸກພາກສ່ວນຈັດຕັ້ງເຜີຍແຜ່ ເຊື່ອມຊຶມມະຕິຕົກລົງຂອງລັດຖະບານ ວ່າດ້ວຍນະໂຍບາຍ ແລະ ມາດຕະການແກ້ໄຂ ບັນຫາການຂາດແຄນຄູສອນ, ການປະລະການຮຽນ ແລະ ການສົ່ງເສີມເຂົ້າຮຽນວິຊາຊີບ ສະບັບເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023 ໃຫ້ປາກົດຜົນເປັນຈິງ ແລະ ຈັດຕັ້ງຜັນຂະຫຍາຍຄຳແນະນຳ ຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1289/ສສກ, ລົງວັນທີ 25 ສິງຫາ 2023;
2. ມອບໃຫ້ ພະແນກສຶກສາທິການ ແລະ ກິລາ ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ສະຫຼຸບ ລາຍງານຂັ້ນເທິງຖັດຕົນກ່ອນວັນທີ 20 ຂອງແຕ່ລະເດືອນ;
3. ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ຮັບການມອບໝາຍໜ້າວຽກດັ່ງກ່າວ ໃຫ້ຮີບຮ້ອນແບ່ງຄວາມຮັບຜິດຊອບ, ກຳນົດເປັນແຜນການ, ໂຄງການ, ກິດຈະກຳຈັດຕັ້ງປະຕິບັດຢ່າງມີຈຸດສຸມ, ມີຄາດໝາຍຈະແຈ້ງ, ກຳນົດເວລາ ແລະ ມາດຕະການຈັດຕັ້ງປະຕິບັດແຕ່ລະໜ້າວຽກໃຫ້ລະອຽດ ພ້ອມທັງມີການຕິດຕາມ, ກວດກາ, ສະຫຼຸບລາຍງານປະຈຳເດືອນ, ສາມເດືອນ, ຫົກເດືອນ ແລະ ປະຈຳປີ;

**ມາດຕາ 6 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ..05..... ເດືອນ ..10.. ປີ 2023 ເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງອຸດົມໄຊ
ເຈົ້າແຂວງ

ບຸນຄົງ ຫຼ້າຈຽມພອນ